# ເພງ ຫຼັກເຈັດຫຼັກໃຈ

ໂດຍ: ທນູ ນິຣາວັນ   ທຳນອງ: Classic

F#m  A  Bm  C#m   F#m  A  Bm  C#m

F#m                              A
ຫຼັກເຈັດ                          ເຂດແຂວງສວັນ
          E7                     F#m
ຄືສະຖາບັນ                         ສ້າງອົບຮົມຄຣູ
          D                      C#m
ໃຫ້ການສຶກສາ                       ວິຊາຄວາມຮູ້
Bm      E7                       F#m
ຍັງຝັງໃຈຢູ່                         ຄຽງຄູ່ຊີວັນ
F#m                              A
ເພື່ອນມິດ                          ນິສິດສຶກສາ
          E7                     F#m
ຮ່ວມຮຽງກັນມາ                      ເໝືອນພີ່ນ້ອງກັນ
          D                      C#m
ຍັງຄິດອາລັຍ                        ຫົວໃຈສະທ້ານ
Bm      E7                       F#m
ເອື້ອຍອ້າຍອາຈານ                    ບໍ່ເຄີຍລືມເລີຍ

D                                F#m
ຫຼັກເຈັດ                          ເຈົ້າຄືຫຼັກໃຈ
          E7                     F#m
ເຖິງຄວາມຈາກໄກ                     ໃຈເສົ້າເຫຼືອເອີ່ຍ
          D                      C#m
ບໍ່ມີວັນ                           ຈະລືມເຈົ້າເລີຍ
Bm      E7                       F#m
ຄິດເຖິງບ່ອນເຄີຍ                    ກິນນອນອາສັຍ
F#m                              A
ຫຼັກເຈັດ                          ຂ້າຍັງຄວນຫາ
          E7                     F#m
ຄວາມຫຼັງຕິດຕາ                     ຝັງຕຣຶງຣຶທັຍ
          D                      C#m
ເຖິງແມ່ນຈາກລາ                     ຢູ່ແຫ່ງຫົນໃດ
Bm      E7                       F#m
ຫຼັກເຈັດຫຼັກໃຈ                     ຂ້າຈະຫວນມາ